**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

# ຜ-ຟຟລ ຮ່ວມມອບເງິນອຸດໜູນແກ່ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ

ເພື່ອເປັນການປະກອບສ່ວນບັນເທົາທຸກຜູ້ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມທີ່ເມືອງສະໜາມໄຊ ແຂວງອັດຕະປື, ໃນວັນທີ 03 ທັນວາ 2018, ຄະນະຜູ້ອຳນວຍການໃຫຍ່ ແລະ ຕົວແທນ 3 ອົງການຈັດຕັ້ງມະຫາຊົນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ຮ່ວມກັບ ຄະນະຄອບຄົວການນຳ ຊຶ່ງນຳໂດຍ ຄອບຄົວ ທ່ານ ນາງ ນາລີ ສີສຸລິດ, ພັນລະຍາ ທ່ານ ນາຍົກລັດຖະມົນຕີແຫ່ງ ສປປ ລາວ, ຄອບຄົວການນຳຊວງພະລັງງານ ແລະ ບໍ່ແຮ່, ຄອບຄົວນັກການທູດກະຊວງການຕ່າງປະເທດ, ສະມາຄົມນັກທຸລະກິດຍິງນະຄອນປາກເຊ ແຂວງຈຳປາສັກ, ຄອບຄົວ ທ່ານ ວຽງສະຫ້ອນ ສີພັນດອນ, ຄອບຄົວ ສຸຍາວົງ, ຄອບຄົວ ທ່ານ ສົມມາດ ພົນເສນາ, ນາຍພົນ ວົງສັກ, ທ່ານ ປ້າ ບົວໄລ ຈິດມະນີ, ທ່ານ ນາງ ວັນນາລີ ໄຊຍະແສງ, ຄອບຄົວ ດາວເພັດ ວົງນະຄອນ + ທ່ານ ຕ້ອມ ອິນແປງ, ທ່ານ ນາງ ນ້ອຍ ຄອນສະຫວັນ ແລະ ຄອບຄົວ ທ່ານ ສອນເພັດ ເມືອງວົງ ໄດ້ມອບເງິນ ອຸດໜູນ ແລະ ເຄື່ອງໃຊ້ຈຳນວນໜຶ່ງໃຫ້ກັບຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມຈຳນວນ 1.120 ຄອບຄົວ ລວມເປັນເງິນ 280.000.000 ລ້ານກີບ ໃນນັ້ນຈຳນວນ 60.119.000 ກີບ ແມ່ນເງິນທີ່ບັນດາພະນັກງານ ຜ-ຟຟລ ເປັນຜູ້ຮ່ວມບໍລິຈາກ ຮ່ວມກັບພາສ່ວນຕ່າງໆສຳລັບການມອບໃນຄັ້ງນີ້.



ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌:www.edlgen.com.la